# ມິຊຊາອາທິດທີ 23 ກຳມະດາ ປີ B
## ວັນອາທິດທີ 09 ກັນຍາ 2018



**ພຣະວໍລະສານໂດຍນັກບຸນມາກໂກ 7, 31-37**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດອອກຈາກເຂດເມືອງຕີໂຣ ຜ່ານເມືອງຊີດອນ ແລະແຂວງເດກາໂປນ ເພື່ອໄປສູ່ທະເລສາບກາລີເລ. ມີຄົນພາຄົນປາກກືກຫູໜວກຜູ້ໜຶ່ງມາຫາພຣະອົງ ຂໍພຣະອົງຊົງປົກພຣະຫັດ. ພຣະເຢຊູເຈົ້າຊົງພາຄົນນັ້ນອອກຫ່າງຈາກຝູງຄົນ, ຊົງປ່ອນນິ້ວມືເຂົ້າໃນໂກນຫູເຂົາ, ເອົານ້ຳລາຍແປະໃສ່ລີ້ນໃຫ້ແລ້ວພຣະອົງຊົງເງີຍໜ້າຂຶ້ນເບື້ອງບົນ ທັນໃຈຍາວແລ້ວກ່າວແກ່ຜູ້ນັ້ນວ່າ: "ແອຟເຟຕາ" ໝາຍຄວາມວ່າ: "ຈົ່ງເປີດອອກ". ໃນທັນທີຫູຂອງເຂົາກໍໄດ້ຍິນ, ລີ້ນກໍມາຍອອກແລະປາກໄດ້ຊັດແຈ້ງ.

ພຣະເຢຊູເຈົ້າຊົງຫ້າມບໍ່ໃຫ້ເວົ້າເລື່ອງນີ້ໃຫ້ຜູ້ໃດຟັງ. ແຕ່ຍິ່ງຫ້າມພວກເຂົາກໍຍິ່ງປະກາດ. ພວກຜູ້ຄົນມີຄວາມອັດສະຈັນໃຈເປັນຢ່າງຍິ່ງເວົ້າວ່າ: ຄົນຜູ້ນີ້ທຳສິ່ງໃດກໍດີໝົດ. ເພິ່ນທຳໃຫ້ຄົນຫູໜວກໄດ້ຍິນ ແລະຄົນກືກປາກໄດ້.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 7, 31-37**

ພວກເຮົາຈະເຂົ້າໃຈແລະເຫັນຄວາມສຳຄັນຂອງການໄຖ່ກູ້ໃນຕົວຂອງອົງພຣະເຢຊູກຣິສໂຕເຈົ້າ, ພຣະຜູ້ກູ້ໄຖ່ຂອງພວກເຮົາ ກໍຕໍ່ເມື່ອພວກເຮົາມີປະສົບການໃນການຖືກໜີບເຕັງດ້ວຍສິ່ງຮ້າຍອັນຕະລາຍ ແລະເປັນຕົ້ນດ້ວຍພະຍາດໂລຄາ ເຊັ່ນຄົນປາກກືກແລະຫູໜວກ. ຄົນທີ່ເປັນພິການປະເພດນີ້ ບໍ່ໄດ້ຢູ່ຮ່ວມໃນສັງຄົມກັບຄົນອື່ນ. ຍ້ອນເຂົາບໍ່ສາມາດຟັງແລະປາກເວົ້າໃນສິ່ງທີ່ເຂົາເຂົ້າໃຈແລະຮູ້ສຶກກັບຄົນອື່ນ. ສິ່ງນີ້ບໍ່ພຽງແຕ່ເຮັດໃຫ້ເຂົາເປັນຄົນພິການດ້ານຮ່າງກາຍ, ແຕ່ຍັງເປັນພິການດ້ານຈິດໃຈແລະຄວາມຮູ້ສຶກອີກດ້ວຍ. ເພາະບໍ່ມີໃຜສາມາດເຂົ້າໃຈເຂົາ ແລະເຂົາເອງກໍບໍ່ສາມາດເຂົ້າໃຈຄົນອື່ນໄດ້. ດັ່ງນັ້ນ, ສິ່ງທີ່ເຂົາລໍຖ້າແລະປາດຖະໜາເປັນຢ່າງຍິ່ງຄືການໄດ້ຫລຸດພົ້ນອອກຈາກສິ່ງທີ່ຜູກມັດເຂົາ ເພື່ອເຂົາຈະສາມາດປາກເວົ້າສື່ສານແລະເຂົ້າໃຈຄົນອື່ນ. ສິ່ງນີ້ຈະຫລຸດພົ້ນໄດ້ ກໍຕໍ່ເມື່ອເຂົາຍອມໃຫ້ພຣະເຢຊູເຈົ້າ, ພຣະຜູ້ກູ້ໄຖ່ໄດ້ເປີດໄຂລີ້ນແລະຫູຂອງເຂົາ.

« ແອຟຟາຕາ » ຂໍຈົ່ງເປີດໄຂລີ້ນຂອງຂ້າພະເຈົ້າ. ເພື່ອຂ້າພະເຈົ້າຈະໄດ້ສັນລະເສີນພຣະເຈົ້າ ແລະເປັນຕົ້ນຈະໄດ້ນຳເອົາວາຈາທີ່ສ້າງສັນແລະໃຫ້ຊີວິດຂອງພຣະເຈົ້າໃຫ້ກັບຄົນອື່ນ. ເປັນຕົ້ນຄົນທີ່ຢູ່ໃນຄວາມໂສກເສົ້າແລະສິ້ນຫວັງ ເພື່ອເຂົາຈະໄດ້ຄົ້ນພົບກັບຊີວິດໃໝ່ໃນອົງແຫ່ງຄວາມຫວັງແລະຄວາມຍິນດີຄືພຣະເຢຊູກຣິສໂຕເຈົ້າ.

« ແອຟຟາຕາ » ຂໍຈົ່ງເປີດໄຂຫູຂອງຂ້າພະເຈົ້າ. ເພື່ອຂ້າພະເຈົ້າຈະໄດ້ຟັງພຣະສຸລະສຽງຂອງພຣະເຈົ້າ. ແລະເປັນຕົ້ນຈະໄດ້ຟັງສຽງຮ້ອງທຸກຂອງເພື່ອນພີ່ນ້ອງຂອງຂ້າພະເຈົ້າໃນຍາມຂັດສົນ, ໃນຍາມອັນຕະລາຍ. ເພື່ອຂ້າພະເຈົ້າຈະໄດ້ນຳເອົາຄວາມຮັກ, ຄວາມເມດຕາຂອງພຣະເຈົ້າໄປໃຫ້ຜູ້ທີ່ຕ້ອງການຄວາມຊ່ວຍເຫລືອດ້ານຊີວິດກໍຄືດ້ານຈິດວິນຍານ.

ວັນນີ້ຂໍພຣະເຢຊູເຈົ້າຈົ່ງເປີດໄຂບໍ່ພຽງແຕ່ລີ້ນ, ຫູຂອງຂ້າພະເຈົ້າເທົ່ານັ້ນ ແຕ່ຍັງແມ່ນດວງໃຈທີ່ແຂງກະດ້າງຂອງຂ້າພະເຈົ້າອີກດ້ວຍ. ເພື່ອຂ້າພະເຈົ້າຈະໄດ້ສຳພັດເຖິງຄວາມສຳຄັນຂອງການໄຖ່ກູ້ຈາກພຣະອົງ. ແລະເມື່ອໄດ້ຮັບການກູ້ໄຖ່ຢ່າງແທ້ຈິງແລ້ວ ຂ້າພະເຈົ້າຈະໄດ້ເປັນເຄື່ອງມືແຫ່ງການໄຖ່ກູ້ຂອງພຣະອົງໃຫ້ກັບຄົນອື່ນ. ເປັນຕົ້ນຄົນທີ່ຍັງຢູ່ເຂດສອກຫລີກ, ຄົນທີ່ຍັງບໍ່ຮູ້ຈັກພຣະເຈົ້າ ຫລືຄົນທີ່ຮູ້ຈັກພຣະເຈົ້າແລ້ວແຕ່ຍັງບໍ່ໄດ້ເປີດໃຈໃຫ້ກັບພຣະອົງ. ເພາະຄວາມຣອດແມ່ນພຣະທັນສະທານຂອງພຣະເຈົ້າໃຫ້ກັບທຸກຄົນທີ່ເຊື່ອແລະເປີດໃຈຮັບດ້ວຍຄວາມຍິນດີ.

ຂໍໃຫ້ວາຈາຂອງພຣະເຈົ້າໃນວັນນີ້ເປັນໂອສົດຮັກສາປິ່ນປົວແລະເປີດໄຂສິ່ງທີ່ຍັງປົກປິດແລະບໍ່ສອດຄ່ອງກັບຄຳສອນແລະນ້ຳພຣະໄທຂອງພຣະເຈົ້າໃນຊີວິດຂອງພວກເຮົາ. ເພື່ອພວກເຮົາຈະໄດ້ຮັບການປິ່ນປົວແລະເຫັນແຈ້ງເຖິງຄວາມຮັກແລະຄວາມຣອດຂອງພຣະອົງເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ